# ເສັ້ນທາງລົດໄຟ ລາວ-ຈີນ ເປັນເສັ້ນທາງແຫ່ງຄວາມສຸກຢູ່ໜ້າປະຕູເຮືອນ

ວັນທີ 3 ທັນວານີ້ ແມ່ນວັນຄົບຮອບ 4 ປີ ໃນການເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ. 4 ປີຜ່ານມາ, "ເສັ້ນທາງຄຳດ້ານການຂົນສົ່ງ" ທີ່ມີຄວາມຍາວທັງໝົດ 1,350 ກິໂລແມັດ, ທາງສາຍນີ້ໄດ້ກາຍເປັນໂຄງການສັນຍະລັກ ແລະ ໂຄງການສາທິດໃນການຮ່ວມກັນສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ດ້ວຍຄຸນນະພາບສູງ ເຊິ່ງໄດ້ຊຸກຍູ້ໃຫ້ປະເທດລາວໄດ້ບັນລຸການຫັນປ່ຽນຈາກ "ປະເທດທີ່ບໍ່ມີຊາຍແດນຕິດກັບທະເລ" ມາເປັນ "ປະເທດເຊື່ອມໂຍງເຊື່ອມຈອດກັບພາກພື້ນ". ນີ້ແມ່ນເສັ້ນທາງແຫ່ງຄວາມສຸກຢູ່ໜ້າປະຕູເຮືອນຂອງປະຊາຊົນຫຼາຍລ້ານຄົນ, 4 ປີຜ່ານມາ, ເສັ້ນທາງລົດໄຟລາວ-ຈີນ ບໍ່ພຽງແຕ່ໄດ້ຊຸກຍູ້ການພັດທະນາດ້ານການຈໍລະຈອນສິນຄ້າ, ດ້ານຂໍ້ມູນຂ່າວສານ ແລະ ດ້ານການລົງທຶນເທົ່ານັ້ນ, ກໍຍັງໄດ້ສ້າງໂອກາດພັດທະນາໃຫ້ແກ່ຕົວເມືອງ ແລະ ບ້ານຕ່າງໆທີ່ຢູ່ລຽບຕາມເສັ້ນທາງ, ຍັງໄດ້ປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນທຳມະດາທີ່ດຳລົງຊີວິດຢູ່ລຽບຕາມເສັ້ນທາງຢ່າງເລິກເຊິ່ງອີກດ້ວຍ.

### ເລື່ອງແຫ່ງຄວາມສຸກຂອງ "ທູດຝ່າຍພົນລະເຮືອນ"

ເສັ້ນທາງລົດໄຟລາວ-ຈີນ ພວມໄດ້ປ່ຽນແປງຊີວິດການເປັນຢູ່ຂອງຊາວໜຸ່ມຫຼາຍຄົນທີ່ດຳລົງຊີວິດຢູ່ລຽບຕາມເສັ້ນທາງລົດໄຟສາຍນີ້, ທ້າວ ວິລະໄຊ ນັກສຶກສາປີ 2 ຂອງວິທະຍາໄລຜູເອີ ທີ່ມາຈາກແຂວງອຸດົມໄຊແມ່ນໜຶ່ງໃນຜູ້ໄດ້ຮັບຜົນປະໂຫຍດ. ແຕ່ກ່ອນ, ນ້າບ່າວຂອງທ້າວ ວິລະໄຊ ໄປຮຽນຢູ່ນະຄອນຄຸນໝິງຂອງຈີນ, ຕ້ອງຂີ່ລົດເມເປັນເວລາ 3 ວັນ, ຈຶ່ງສາມາດເດີນທາງໄປເຖິງ; ປັດຈຸບັນ, ທ້າວ ວິລະໄຊ ຂີ່ລົດໄຟຕາມເສັ້ນທາງລົດໄຟລາວ-ຈີນ ໃຊ້ເວລາພຽງ 6 ຊົ່ວໂມງເທົ່ານັ້ນ, ກໍສາມາດເດີນທາງໄປເຖິງວິທະຍາໄລຜູເອີແລ້ວ.

ເສັ້ນທາງລົດໄຟບໍ່ພຽງແຕ່ໄດ້ປະຢັດເວລາໃນການເດີນທາງເທົ່ານັ້ນ, ຫາກຍັງໄດ້ປ່ຽນແປງສະພາບນິເວດດ້ານການປະກອບອາຊີບ ແລະ ແນວຄວາມຄິດດ້ານການພັດທະນາບ້ານເກີດຂອງ ທ້າວ ວິລະໄຊ ອີກດ້ວຍ.

ຢູ່ບ້ານເກີດຂອງ ທ້າວ ວິລະໄຊ, ໃນໄລຍະທີ່ບໍ່ທັນໄດ້ເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ, ຄົນສ່ວນຫຼາຍຈະທຳມາຫາກິນດ້ວຍການປູກຝັງ ແລະ ເຮັດຫັດຖະກຳຈັກສານ. ຄຽງຄູ່ກັບການເປີດນຳໃຊ້ເສັ້ນທາງລົດໄຟ, ວິສາຫະກິດຈີນໄດ້ໄປລົງທຶນຢູ່ບ້ານເກີດຂອງ ທ້າວ ວິລະໄຊ ເປັນຈຳນວນຫຼວງຫຼາຍ ແລະ ສ້າງໂອກາດປະກອບອາຊີບໃໝ່. ທ້າວ ວິລະໄຊ ເລີ່ມຮຽນພາສາຈີນຢູ່ນອກໂມງຮຽນໃນຕອນຮຽນມັດທະຍົມປາຍ, ລາວສັງເກດເຫັນວ່າ: "ປັດຈຸບັນ, ເມືອງໄຊມີສູນຝຶກອົບຮົມພາສາຈີນຫຼາຍແຫ່ງ... ຫຼາຍຄອບຄົວລ້ວນແຕ່ຫວັງໃຫ້ລູກຂອງຕົນໄປຮຽນພາສາຈີນ, ຍ້ອນວ່າຖ້າຮູ້ພາສາຈີນ, ຈະສາມາດໄປເຮັດວຽກຢູ່ໃນວິສາຫະກິດຈີນ ແລະ ມີລາຍຮັບສູງກວ່າ."

ທ້າວ ວິລະໄຊ ມີຄວາມປາຖະໜາຕໍ່ອະນາຄົດຂອງຕົນ. ພາຍຫຼັງຮຽນຈົບແລ້ວ, ລາວກຽມຈະສືບຕໍ່ພັດທະນາຢູ່ຈີນ, ຫຼືກັບໄປລາວເຮັດວຽກໃນດ້ານແປພາສາ ຫຼື ການສອນພາສາຈີນ ເພື່ອເສີມສ້າງມິດຕະພາບລະຫວ່າງ ລາວ-ຈີນ. ຊາວໜຸ່ມລາວທີ່ຄ້າຍຄືກັນກັບ ທ້າວ ວິລະໄຊ ນັບມື້ນັບຫຼາຍຂຶ້ນ, ພວກເຂົາເຈົ້າຂີ່ລົດໄຟຕາມເສັ້ນທາງລົດໄຟ ລາວ-ຈີນ ໄປຮຽນເອົາຄວາມຮູ້ຢູ່ຈີນ ແລະ ກັບມາສ້າງສາພັດທະນາປະເທດຊາດຂອງຕົນ, ພວກເຂົາເຈົ້າຖືກເອີ້ນວ່າເປັນ "ທູດຝ່າຍພົນລະເຮືອນ" ແຫ່ງການຮ່ວມມືເສດຖະກິດຈີນ-ລາວ.

### ຕະຫຼາດນັດຂ້າມຊາດເຮັດໃຫ້ຊີວິດມີຄວາມສຸກ

ເສັ້ນທາງລົດໄຟລາວ-ຈີນ ເຮັດໃຫ້ການໄປມາຫາສູ່ກັນລະຫວ່າງບ້ານຕ່າງໆຢູ່ລຽບຕາມຊາຍແດນສອງປະເທດຈີນ ແລະ ລາວ ນັບມື້ນັບແໜ້ນແຟ້ນຂຶ້ນແບບບໍ່ເຄີຍມີມາກ່ອນ.

ໃນມື້ເປີດຕະຫຼາດນັດໝູນວຽນມາເຖິງ, ຄົນທັງຫຼາຍກໍພາກັນມາຊື້ຊີ້ນປີ້ງຢູ່ໜ້າຮ້ານຂອງ ນາງ ອີຈິນຄາຍ ຊາວບ້ານບ້ານແລ້ຕາແສງເມີງມານເມືອງຫຼ້າ ກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາຕັ້ງແຕ່ເຊົ້າ, ນາງໄດ້ຫຸ້ມຫໍ່ອາຫານໃຫ້ນັກທ່ອງທ່ຽວ ແລະ ທັງເວົ້າດ້ວຍຄວາມດີໃຈວ່າ: "ທຸກເທື່ອໄດ້ເປີດຮ້ານຂາຍເຄື່ອງຢູ່ໜ້າປະຕູເຮືອນກໍສາມາດສ້າງລາຍຮັບໄດ້ຫຼາຍພັນຢວນ, ຄອບຄົວຂ້ອຍໄດ້ກາຍເປັນຄອບຄົວແຮກສຸດກັບຊາວບ້ານຝ່າຍລາວ." ນາງ ອີຈິນຄາຍ ມີຍາດພີ່ນ້ອງຝ່າຍລາວ 8 ຄອບຄົວ, ໃນມື້ເປີດຕະຫຼາດນັດໝູນວຽນມາເຖິງ, ທຸກເທື່ອຈະເຂົ້າຈີນກ່ອນມື້ໜຶ່ງ ເພື່ອມາຊື້ເຄື່ອງຫຼືກຽມເປີດຮ້ານຂາຍເຄື່ອງ.

ຊາຍຜູ້ໜຶ່ງ ທີ່ເປັນຊາວບ້ານຈາກເມືອງສິງ ແຂວງອຸດົມໄຊ ກ່າວວ່າ: "ການເດີນທາງຈາກເມືອງສິງມາຫານີ້ສາມາດໄປ-ກັບໃນມື້ໜຶ່ງ, ສະດວກສະບາຍຫຼາຍ. ເມື່ອເປີດຕະຫຼາດນັດ, ຂ້ອຍຈະມາຕັ້ງຮ້ານຢູ່ນີ້ທຸກເທື່ອ." ລາວກ່າວຕື່ມວ່າ: ປະຊາຊົນທີ່ມາເຂົ້າຮ່ວມຕະຫຼາດນັດມີຈຳນວນຫຼວງຫຼາຍ, ຂ້ອຍມາຂາຍຢາລາວ ແລະ ເຄື່ອງດື່ມຢູ່ນີ້, ຈະຂາຍໝົດທຸກເທື່ອ ແລະ ໄດ້ສ້າງລາຍຮັບທີ່ດີ.

ໂດຍອີງໃສ່ນັກທ່ອງທ່ຽວ ແລະ ຄວາມສະດວກສະບາຍຍ້ອນການເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ, ທາງບ້ານຍັງໄດ້ສ້າງສິ່ງກໍ່ສ້າງດ້ານວັດທະນະທຳທ່ອງທ່ຽວທີ່ສົມຄູ່ກັນ ແລະ ຕະຫຼາດຄ້າຂາຍຜະລິດຕະພັນທີ່ມີເອກະລັກພິເສດຂອງຈີນ ແລະ ລາວ "ເພື່ອເຮັດໃຫ້ທຸກຄອບຄົວໄດ້ຮັບຜົນປະໂຫຍດຍ້ອນການທ່ອງທ່ຽວ".

ປ້າຍ "ສະຖານີໄປສະນີທາງບ້ານ" ທີ່ຕັ້ງຢູ່ໃນເດີ່ນບ້ານຂອງອ້າຍຊູ ເລຂາພັກ ແລະ ນາຍບ້ານ ບ້ານແລ້ ໄດ້ປະຈັກຕາຫຼາຍ. ທີ່ຈິງແລ້ວ, ບ້ານແລ້ ແລະ ບ້ານນາຄຳຂອງລາວໄດ້ເອີ້ນກັນວ່າເປັນ "ລາວເກິ່ງ", ມີຄວາມໝາຍວ່າເປັນ "ເພື່ອນມິດທີ່ມີອາຍຸຊ່ຳກັນ", ສອງບ້ານນີ້ໄດ້ໄປມາຫາສູ່ກັນເລື້ອຍໆ. ຊາວບ້ານຝ່າຍຈີນໄດ້ຊ່ວຍຮັບເອົາສິນຄ້າທີ່ເພື່ອນມິດຝ່າຍລາວສັ່ງຊື້ຕາມທາງອິນເຕີເນັດຂອງຈີນ. ອ້າຍຊູ ກ່າວວ່າ: "ເພື່ອນມິດຝ່າຍລາວມາຮ່ວມຕະຫຼາດນັດ, ທັງສາມາດມາເອົາສິນຄ້າທີ່ຊື້ຈາກທາງອິນເຕີເນັດຢູ່ນຳເຮົາ, ມີຄວາມສະດວກສະບາຍຫຼາຍ."

ວັນເວລາໄດ້ຜ່ານພົ້ນໄປ, ມິດຕະພາບລະຫວ່າງຊາວບ້ານຂອງສອງບ້ານດັ່ງກ່າວກໍໄດ້ນັບມື້ນັບເພີ່ມຂຶ້ນ ຍ້ອນການເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ.

### ເຮັດໃຫ້ຄວາມຝັນເປັນຈິງ

4 ປີຜ່ານມາ, ເສັ້ນທາງລົດໄຟ ລາວ-ຈີນ ໄດ້ຫັນຈາກເສັ້ນທາງຂົນສົ່ງສິນຄ້າກາຍມາເປັນສູນກາງເສດຖະກິດ ທີ່ຂັບເຄື່ອນການພັດທະນາຂອງພາກພື້ນ ແລະ ໄດ້ຍົກລະດັບການຫັນປ່ຽນຮູບການເສດຖະກິດຂອງເຂດລຽບຕາມເສັ້ນທາງຢ່າງພົ້ນເດັ່ນ.

ຢູ່ລາວ, ເສັ້ນທາງລົດໄຟລາວ-ຈີນ ໄດ້ຊຸກຍູ້ "ການພັດທະນາແບບກ້າວກະໂດດຂັ້ນ" ຂອງເຂດລຽບຕາມເສັ້ນທາງ. ເຂດເສດຖະກິດກອມລອມໄຊເຊດຖານະຄອນຫຼວງວຽງຈັນ ທີ່ຮ່ວມມືໂດຍສອງປະເທດລາວ ແລະ ຈີນ ໄດ້ລົງທຶນ 5 ຕື້ໂດລາ, ໄດ້ສ້າງໂຮງງານມາດຕະຖານ 1 ແສນຕາແມັດ ແລະ ຕຶກອາຄານບ່ອນຢູ່ອາໄສຂອງພະນັກງານ 5.000 ຄົນ. ນັບມາຮອດເດືອນສິງຫາປີ 2025, ມີວິສາຫະກິດ 166 ແຫ່ງມາລົງທຶນຢູ່ໃນເຂດເສດຖະກິດກອມລອມໄຊເຊດຖາ, ໃນນັ້ນ, ມີ 96 ແຫ່ງໄດ້ເລີ່ມການຜະລິດແລ້ວ, ໃນທຶກເດືອນຕົ້ນປີນີ້, ໄດ້ສ້າງວຽກເຮັດງານທຳໃຫ້ແກ່ 8,000 ກວ່າຄົນແລ້ວ, ເມື່ອຮອດທ້າຍປີ, ຄາດວ່າຈະຫຼາຍກວ່າ 15,000 ຄົນ.

ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນໄດ້ຮັບການປັບປຸງໃຫ້ດີຂຶ້ນຍ້ອນໄດ້ສ້າງເຂດເສດຖະກິດກອມລອມໄຊເຊດຖາ. ຍິງຄົນໜຶ່ງທີ່ເຮັດວຽກຢູ່ໃນບໍລິສັດເຄື່ອງນຸ່ງ (ລາວ) ຈຳກັດ ມາຈາກເຂດຊົນນະບົດຂອງນະຄອນຫຼວງວຽງຈັນ, ແຕ່ກ່ອນ, ຄອບຄົວຂອງລາວສ່ວນຫຼາຍໄດ້ປູກແຕ່ເຂົ້າເທົ່ານັ້ນ, ລາຍຮັບຄອບຄົວມີຄວາມຈຳກັດຫຼາຍ. ນາງເວົ້າວ່າ: "ຄວາມຝັນຂອງຂ້ອຍແມ່ນຢາກໄປທ່ອງທ່ຽວຈີນ." ຊາຍຜູ້ໜຶ່ງທີ່ເປັນພະນັກງານບໍລິສັດຢາສະໝຸນໄພມີແຜນຈະປຸກເຮືອນຢູ່ນະຄອນຫຼວງວຽງຈັນ. ພາຍຫຼັງປຸກເຮືອນແລ້ວ, ຈະຮັບເອົາພໍ່ແມ່ທີ່ຢູ່ຊົນນະບົດມາດຳລົງຊີວິດຢູ່ນະຄອນຫຼວງວຽງຈັນ.

ບໍລິສັດເສື້ອຜ້າອາພອນຊານລຽນຢຸນນານຈຳກັດ ແມ່ນວິສາຫະກິດທີ່ໄດ້ເຂົ້າປະຈຳຢູ່ເຂດຮ່ວມມືເສດຖະກິດບໍ່ຫານ-ບໍ່ເຕັນຈີນ-ລາວ, ທ່ານ ຫຼິວຊິວເວີນ ຫົວໜ້າຝ່າຍບຸກຄະລາກອນຂອງບໍລິສັດ ກ່າວວ່າ: ຊັບພະຍາກອນມະນຸດລາວ ແລະ ເສັ້ນທາງລົດໄຟລາວ-ຈີນ ໄດ້ດຶງດູດວິສາຫະກິດຕ່າງໆມາສ້າງໂຮງງານຢູ່ເຂດຮ່ວມມືເສດຖະກິດດັ່ງກ່າວນັບມື້ນັບຫຼາຍຂຶ້ນ.

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງຫຼວງພະບາງ ຕີລາຄາວ່າ: "ການຮ່ວມກັນສ້າງ 'ໜຶ່ງແລວ ໜຶ່ງເສັ້ນທາງ' ດ້ວຍຄຸນນະພາບສູງ ໄດ້ສ້າງຜົນປະໂຫຍດຕົວຈິງໃຫ້ແກ່ລາວ." ທ່ານກ່າວຕື່ມອີກວ່າ: ເສັ້ນທາງລົດໄຟ ລາວ-ຈີນ ບໍ່ພຽງແຕ່ໄດ້ປະຢັດເວລາໃນການເດີນທາງເທົ່ານັ້ນ, ຫາກຍັງໄດ້ສ້າງສະພາບການເສດຖະກິດຂອງພາກພື້ນຄືນໃໝ່, ໄດ້ຮັດແໜ້ນສາຍພົວພັນລະຫວ່າງລາວ-ຈີນ ແລະ ບັນດາປະເທດໃນພາກພື້ນອາຊີຕາເວັນອອກສຽງໃຕ້ຕື່ມອີກ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)



ມາຮອດວັນທີ 2 ທັນວານີ້, ເສັ້ນທາງລົດໄຟ ລາວ-ຈີນໄດ້ຂົນສົ່ງຜູ້ໂດຍສານຫຼາຍກວ່າ 62.5 ລ້ານເທື່ອຄົນ ແລະ ຂົນສົ່ງສິນຄ້າຫຼາຍກວ່າ 72.5 ລ້ານໂຕນ.







ynzhanba@163.com
laos.yunnangateway.com